ພິທີເຊັນບົດບັນທຶກຄວາມເຂົ້າໃຈ (MOU) ສຶກສາຄວາມເປັນໄປໄດ້ໃນການລົງທຶນ ໃນຂະແໜງພະລັງງານຢູ່ ສປປ ລາວ ລະຫວ່າງ ຜ-ຟຟລ ແລະ Gulf Energy Development Public Company Limited (Gulf).

ໃນວັນທີ 15 ມີນາ 2023, ທີ່ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ໄດ້ຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ແລະ Gulf Energy Development Public Company Limited (GULF) ເພື່ອສຶກສາຄວາມເປັນໄປໄດ້ໃນການລົງທຶນ ການກໍ່ສ້າງ ໂຄງການ ພະລັງງານໄຟຟ້າຕ່າງໆໃນ ສປປ ລາວ ເພື່ອສົ່ງເສີມການສະໜອງພະລັງງານໄຟຟ້າສົ່ງອອກໄປສູ່ ປະເທດໄທ ໂດຍແນໃສ່ໂຄງການເຂື່ອນໄຟຟ້າທີ່ ຜ-ຟຟລ ມີແຜນທີ່ຈະລົງທຶນໃນອະນາຄົດ.

ໃນພິທີເຊັນບົດບັນທຶກຄວາມເຂົ້າໃຈໃນຄັ້ງນີ້ ໄດ້ມີຕົວແທນຈາກທັງ 2 ບໍລິສັດເຂົ້າຮ່ວມລົງນາມໃນ (MOU) ສະບັບດັ່ງກ່າວ, ເຊິ່ງປະກອບມີ ທ່ານ ອັນແສງ ອັນມະວົງ ຮັກສາການ ຜູ້ອຳນວຍການໃຫຍ່ ຜ-ຟຟລ ແລະ ທ່ານ ທ່ານ ຣັດທະພົນ ຊື່ນສົມຈິດ ຮອງປະທານບໍລິຫານ GULF.

ພິທີເຊັ່ນສັນຍາດັ່ງກ່າວແມ່ນເປັນຂີດໝາຍອັນດີ ທີ່ເຕັມໄປດ້ວຍຄວາມໝາຍ ຄວາມສຳຄັນ ແລະ ເປັນບາດກ້າວ ທຳອິດຂອງການຮ່ວມມືເພື່ອສຶກສາ ແລະ ພັດທະນາທາງດ້ານພະລັງງານໄຟຟ້າຂອງທັງສອງບໍລິສັດໃນອານາຄົດ.